ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຄຕລ-ບໍລິສັດ ອຳມະຕະ ບໍລິການທະນາຄານໃຫ້ແກ່ໂຄງການເມືອງໃໝ່




ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ບໍລິສັດ ອຳມະຕະ ຊິດຕີ້ ລາວ ຈຳກັດຜູ້ດຽວ ໄດ້ຈັດພິທີເຊັນບົດບັນທຶກຄວາມເຂົ້າໃຈວ່າດ້ວຍການບໍລິການທະນາຄານໃຫ້ແກ່ໂຄງການເມືອງໃໝ່ທັນສະໄໝ ອຳມະຕະ ຊິດຕີ້ ໃນວັນທີ 27 ພະຈິກ 2020 ທີ່ໂຮງແຮມເມືອງແທ່ງ ນະຄອນຫຼວງວຽງຈັນ ໂດຍການໃຫ້ກຽດເຂົ້າເປັນສັກຂີພະຍານຂອງທ່ານ ບຸນເຫຼືອ ສິນໄຊ ວໍຣະວົງ ຮອງລັດຖະມົນຕີກະຊວງການເງິນ, ປະທານສະພາບໍລິຫານ ທຄຕລ; ທ່ານ ວິກົມ ກົມມະດິດ ປະທານກຸ່ມບໍລິສັດອຳມະຕະປະເທດໄທ (ເຂົ້າຮ່ວມແບບທາງໄກ); ຕາງໜ້າທະນາຄານແຫ່ງ ສປປ ລາວ, ຄະນະອຳນວຍການ ທຄຕລ ແລະ ພາກສ່ວນກ່ຽວຂ້ອງຂອງທັງ 2 ຝ່າຍ ເຂົ້າຮ່ວມ.

ການເຊັນບົດບັນທຶກຄວາມເຂົ້າໃຈຄັ້ງນີ້; ຕາງໜ້າ ທຄຕລ ໂດຍທ່ານ ພູຊົງ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທຄຕລ ແລະ ທ່ານ ອະຣົງ ຕັງປະພຶດກູນ ຜູ້ອຳນວຍການໃຫຍ່ບໍລິສັດ ອຳມະຕະ ຊິດຕີ້ ລາວ ໂດຍຊ້ອງໜ້າພາກສ່ວນກ່ຽວຂ້ອງ ແລະ ໃນປະຈຸບັນ, ທຄຕລ ມີເຄືອຂ່າຍການບໍລິການທັງໝົດ 20 ສາຂາ, 94 ໜ່ວຍບໍລິການ, 15 ໜ່ວຍແລກປ່ຽນ, ມີຖານລູກຄ້າຜູ້ຊົມໃຊ້ mobile banking ກວມປະມານ 70% ຂອງທຸລະກຳທັງໝົດໃນ ສປປ ລາວ. ທຄຕລ ເປັນທະນາຄານ ທີ່ຫຼາກຫຼາຍການບໍລິການເພື່ອອຳນວຍຄວາມສະດວກສະບາຍດ້ານການບໍລິການທະນາຄານໃຫ້ແກ່ສັງຄົມ ແລະ ບັນດາຫົວໜ່ວຍທຸລະກິດ. ໃນນີ້, ການບໍລິການເພື່ອການເບີກຈ່າຍ-ເງິນໂຄງການເປັນອີກໜຶ່ງການບໍລິການຂອງ ທຄຕລ ທີ່ຜ່ານມາກໍ່ໄດ້ໃຫ້ບໍລິການແກ່ຫລາຍພາກສ່ວນ. ການຮ່ວມມືໃນຄັ້ງນີ້, ທຄຕລ ຈະເປັນຜູ້ໃຫ້ບໍລິການທະນາຄານໃຫ້ແກ່ໂຄງການພັດທະນາເມືອງໃໝ່ທັນສະໄໝອຳມະຕະຊິດຕີ້ ທີ່ເປັນໂຄງການລົງທຶນຂະໜາດໃຫຍ່ອີກໂຄງການໜຶ່ງຂອງກຸ່ມບໍລິສັດ ອຳມະຕະ, ບໍລິສັດທີ່ດຳເນີນທຸລະກິດອະສັງຫາລິມມະຊັບທີ່ມີຊື່ສຽງທີ່ສຸດຂອງປະເທດໄທ ແລະ ພາກພື້ນອາຊີ ຊຶ່ງການໃຫ້ບໍລິການຂອງ ທຄຕລ ໃນໂຄງການດັ່ງກ່າວ ປະກອບມີການບໍລິການເປີດບັນຊີເງິນຝາກ; ການບໍລິການໂອນເງິນຊຳລະດ້ວຍທາງອີເລັກໂຫຼນິກໂດຍຜ່ານຊ່ອງທາງຂອງ ທຄຕລ; ການໃຫ້ບໍລິການໂອນເງິນທັງພາຍໃນ ແລະ ຕ່າງປະເທດສຳລັບໂຄງການ; ການເບີກຈ່າຍເງິນທົດແທນໃຫ້ແກ່ຜູ້ໄດ້ຮັບຜົນກະທົບຈາກໂຄງການ ແລະ ລວມໄປເຖິງຄວາມເປັນໄປໄດ້ໃນການສະໜອງແຫຼ່ງທຶນອີງຕາມຄວາມອາດສາມາດ ແລະ ເງື່ອນໄຂຕົວຈິງຂອງ ທຄຕລ.

ໂຄງການພັດທະນາເມືອງໃໝ່ທັນສະໄໝອຳມະຕະຊິດຕີ້ເປັນໂຄງການໜຶ່ງທີ່ມີຄວາມສຳຄັນໃນການສ້າງແຜນຜັງເມືອງຕາມເຂດລ່ອງທາງລົດໄຟລາວ-ຈີນ ໂດຍສະເພາະທີ່ແຂວງອຸດົມໄຊ ແລະ ຫຼວງນ້ຳທາໃຫ້ກາຍເປັນເຂດເສດຖະກິດ ແລະ ສົ່ງເສີມການລົງທຶນທັງພາຍໃນ ແລະ ຈາກຕ່າງປະເທດ. ໂຄງການນີ້ຈະຊ່ວຍໃນການພັດທະນາເສດຖະກິດ ແລະ ສັງຄົມໃຫ້ມີຄວາມຈະເລີນຮຸ່ງເຮືອງຂຶ້ນໃນຕໍ່ໜ້າຊຶ່ງເປັນປະໂຫຍດໂດຍລວມຕໍ່ປະເທດ ແລະ ພໍ່ແມ່ປະຊາຊົນລາວໃນຂອບເຂດທົ່ວປະເທດ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

ຢູ່ເມືອງລາວ ໃຊ້ເງິນກີບລາວ ຊາດລາວກ້າວໄປ